# ພຣູໄລ້ ເຊັບເວີ

ສະສົມທຶນເພື່ອອະນາຄົດ
ປົກປ້ອງ ແລະ ຄຸ້ມຄອງຄົນທີ່ທ່ານຮັກຕອນນີ້.

PRUDENTIAL

Listening. Understanding. Delivering.





## ທາງເລືອກທີ່ສົມບູນແບບຂອງທ່ານສໍາລັບການສະສົມທຶນ ແລະ ການຄຸ້ມຄອງການເງິນ

ບໍ່ວ່າທ່ານຫາກໍ່ເລີ່ມເຮັດວຽກ, ການທ້ອນເງິນໃຫ້ກັບຄອບຄົວ, ຫຼື ກໍາລັງທີ່ຈະວາງແຜນຊີວິດເຖິງຂັ້ນຕໍ່ໄປ. ພຣູໄລ້ ເຊັບເວີ ແມ່ນຜະລິດຕະພັນທີ່ເປັນທາງອອກດ້ານການເງິນໃຫ້ທ່ານ ເນື່ອງຈາກວ່າ ພຣູໄລ້ ເຊັບເວີ ໄດ້ຖືກອອກແບບມາເພື່ອເປັນການສະສົມທຶນ ແລະ ຄຸ້ມຄອງທ່ານໃນເວລາດຽວກັນ. ທ່ານສາມາດຄຸ້ມຄອງຄົນທີ່ທ່ານຮັກທາງດ້ານການເງິນ ຫຼື ຄົນທີ່ທ່ານວາງແຜນສະສົມທຶນຮ່ວມກັນ ໃນຂະນະທີ່ຮັບປະກັນວ່າທ່ານສາມາດບັນລຸເປົ້າໝາຍທີ່ໄດ້ຕັ້ງໄວ້.

ໄລຍະເວລາຂອງສັນຍາປະກັນໄພແມ່ນມີ **10ປີ, 12ປີ ແລະ 15ປີ** ເຊິ່ງທ່ານສາມາດເລືອກໄດ້ຕາມຄວາມຕ້ອງການຂອງທ່ານ. ໃນຊ່ວງໄລຍະເວລາຂອງສັນຍາ, ທ່ານຈະໄດ້ຮັບການຄຸ້ມຄອງທີ່ສູງໃນກໍລະນີທີ່ມີເຫດການທີ່ບໍ່ຄາດຝັນເກີດຂຶ້ນທີ່ສົ່ງຜົນໃຫ້ເສຍຊີວິດ ຫຼື ພິການຖາວອນ. ໃນກໍລະນີທີ່ຢູ່ຄົບສັນຍາ ຫຼື ບໍ່ມີເຫດການຄຸ້ມຄອງເກີດຂຶ້ນ, ພວກເຮົາຈະມອບເງິນຄືນພ້ອມ **ດອກເບ້ຍທີ່ສູງເຖິງ 110%**. ຜົນປະໂຫຍດທັງໝົດ ແມ່ນບໍ່ມີການປ່ຽນແປງ ແລະ ຮັບປະກັນວ່າທ່ານຈະໄດ້ຮັບຜົນ ປະໂຫຍດທັງໝົດ.

## ຜະລິດຕະພັນນີ້ເໝາະສົມກັບທ່ານບໍ່?

- ທ່ານຕ້ອງການທີ່ຈະສະສົມທຶນ ແລະ ຮັບປະກັນການໄດ້ຮັບເງິນຄືນໃນຊ່ວງໄລຍະເວລາທີ່ກໍານົດໄວ້.
- ຄົນທີ່ທ່ານຕ້ອງດູແລ ຜູ້ທີ່ເພິ່ງພາລາຍຮັບຂອງທ່ານເພື່ອນໍາໃຊ້ໃນຊີວິດປະຈໍາວັນ ຫຼື ບຸກຄົນທີ່ທ່ານວາງແຜນການສະສົມທຶນຮ່ວມກັນ.
- ທ່ານວາງແຜນໃນຊີວິດເປັນຕົ້ນເຊັ່ນ: ການຊື້ເຮືອນ, ລົດ, ສ້າງຄອບຄົວ ຫຼື ເລີ່ມເຮັດທຸລະກິດ.
- ທ່ານມີຄວາມຕ້ອງການຈ່າຍຄ່າທໍານຽມປະກັນໄພທີ່ຄົງທີ່ ແລະ ບໍ່ປ່ຽນແປງຕະຫຼອດໄລຍະເວລາຂອງສັນຍາ.
- ທ່ານມີຄວາມຕ້ອງການຄຸ້ມຄອງທີ່ທ່ານສາມາດປັບປ່ຽນໄດ້ໃຫ້ເໝາະສົມກັບຄວາມຕ້ອງການຂອງທ່ານ.
- ທ່ານຕ້ອງການວົງເງິນປະກັນໄພ (ຜົນປະໂຫຍດຂອງການປະກັນໄພ) ທີ່ບໍ່ມີການປ່ຽນແປງຕະຫຼອດໄລຍະເວລາຂອງສັນຍາ ເຊິ່ງສາມາດຕອບສະໜອງຄວາມຕ້ອງການ ແລະ ການສະສົມທຶນໃຫ້ຄົນທີ່ທ່ານຮັກໃນກໍລະນີ ເກີດເຫດທີ່ບໍ່ຄາດຝັນຂຶ້ນກັບຕົວທ່ານເຊິ່ງສົ່ງຜົນໃຫ້ເສຍຊີວິດ ຫຼື ພິການຖາວອນ.

ຮັບປະກັນຈ່າຍເງິນຄືນພ້ອມດອກເບ້ຍ
ເມື່ອທ່ານຢູ່ຄົບສັນຍາ

ປົກປ້ອງຄຸ້ມຄອງ ແລະ
ສະສົມທຶນໃນເວລາດຽວກັນ

ຄ່າທຳນຽມປະກັນໄພສະເລ່ຍພຽງ
5.500ກີບ/ມື້

ຄ່າທຳນຽມປະກັນໄພບໍ່ມີການ
ປ່ຽນແປງຕະຫຼອດໄລຍະເວລາ
ຂອງສັນຍາການປະກັນໄພ

ຜົນປະໂຫຍດສູງເຖິງສອງເທົ່າໃນກໍລະນີ
ທີ່ມີການເສຍຊີວິດຈາກອຸປະຕິເຫດ
ຫຼື ພິການຖາວອນ

ວົງເງິນປະກັນໄພທີ່ບໍ່ຈຳກັດ*

*ຂຶ້ນກັບເງື່ອນໄຂຂອງສຸຂະພາບ ແລະ ການພິຈາລະນາປະກັນໄພຂອງບໍລິສັດ*




**15ປີ*
**ອາຍຸຂອງຜູ້ຖືສັນຍາປະກັນໄພ*
**ຄ່າທຳນຽມປະກັນໄພທີ່ຕ້ອງຈ່າຍລາຍປີ*

## ຮູບແບບຂອງຜະລິດຕະພັນ:

| ສັນຍາການປະກັນໄພ/ ຄ່າທຳນຽມປະກັນໄພ/ ຜົນປະໂຫຍດຂອງສັນຍາ (ປີ) | 15 | 12 | 10 |
|---|---|---|---|
| ອາຍຸນັບຈາກວັນເກີດ ໃນມື້ອອກສັນຍາ | 18 – 45 | 18 – 48 | 18 – 50 |

## ຜົນປະໂຫຍດເມື່ອເສຍຊີວິດ/ພິການຖາວອນ:

**100%** x ວົງເງິນປະກັນໄພທັງໝົດ

**200%** x ວົງເງິນປະກັນໄພທັງໝົດ

- ເມື່ອຜູ້ເອົາປະກັນໄພເສຍຊີວິດ/ພິການຖາວອນ, ຜົນປະໂຫຍດຂ້າງເທິງນີ້ຈະຖືກຈ່າຍ
- ໃນກໍລະນີເສຍຊີວິດຈາກອຸປະຕິເຫດຜົນປະໂຫຍດຈະຖືກຈ່າຍເປັນສອງເທົ່າ

## ຜົນປະໂຫຍດເມື່ອຢູ່ຄົບສັນຍາ:

ເມື່ອຜູ້ເອົາປະກັນຢູ່ຄົບສັນຍາ ແລະ ສັນຍາການປະກັນໄພບໍ່ຂາດອາຍຸໂດຍຈ່າຍຄ່າທຳນຽມປະກັນໄພຄົບຖ້ວນ, ຜົນປະໂຫຍດເມື່ອຢູ່ຄົບສັນຍາຈະຖືກຈ່າຍດັ່ງນີ້:

| ໄລຍະສັນຍາການປະກັນໄພ | 15 | 12 | 10 |
|---|---|---|---|
| | **110%** ຄ່າທຳນຽມລາຍປີ x ໄລຍະເວລາຂອງການຈ່າຍຄ່າທຳນຽມ | **108%** ຄ່າທຳນຽມລາຍປີ x ໄລຍະເວລາຂອງການຈ່າຍຄ່າທຳນຽມ | **105%** ຄ່າທຳນຽມລາຍປີ x ໄລຍະເວລາຂອງການຈ່າຍຄ່າທຳນຽມ |

| | |
|---|---|
| ALB | ມື້ອອກສັນຍານັບຈາກວັນເກີດ |
| TPD | ພິການຖາວອນ |

**ສັນຍາຈະສິ້ນສຸດເມື່ອມີການຮ້ອງຂໍເງິນທົດແທນການເສຍຊີວິດ ຫຼື ພິການຖາວອນ.*

## ກໍລະນີສຶກສາ

**ທ້າວ ບຸນມີ**

- ອາຍຸ 35ປີ / ເພດຊາຍ
- ໄດ້ຕັດສິນໃຈຊື້ຜະລິດຕະພັນ ພຣູໄລ້ ເຊັບເວີ ໂດຍຄໍ້າປະກັນຊີວິດຕົວເອງ ເຊິ່ງມີລັກສະນະດັ່ງນີ້:

| ວົງເງິນຄຸ້ມຄອງທັງໝົດ | ໄລຍະສັນຍາ |
|---|---|
| **120.000.000 ກີບ** | **15 ປີ** |

## ຄ່າທຳນຽມທີ່ທ່ານບຸນມີຕ້ອງຈ່າຍ

| ຮູບແບບການຈ່າຍເງິນທຳນຽມ | ລາຍເດືອນ | ລາຍເຄິ່ງປີ | ລາຍປີ |
|---|---|---|---|
| ຄ່າທຳນຽມຕໍ່ | **400.000 ກີບ** | **2.100.000 ກີບ** | **3.999.500 ກີບ** |

**ຄ່າທຳນຽມແມ່ນຂຶ້ນກັບກໍລະນີຂອງແຕ່ລະຊ່ວງອາຍຸ.*
*ອາດມີລາຍຈ່າຍທີ່ເພີ່ມຂຶ້ນອີງຕາມການພິຈາລະນາການປະກັນໄພ ແລະ ການກວດສຸຂະພາບ.*

## ຜົນປະໂຫຍດທີ່ທ່ານບຸນມີຈະໄດ້ຮັບ

### 1

ຜົນປະໂຫຍດດ້ານການຄຸ້ມຄອງຄອບຄົວ
ຂອງທ້າວບຸນມີໃນກໍລະນີ
ເສຍຊີວິດ ຫຼື ພິການຖາວອນ

ທີ່ບໍ່ເກີດຈາກອຸປະຕິເຫດ

**120.000.000 ກີບ**

ທີ່ເກີດຈາກອຸປະຕິເຫດ

**240.000.000 ກີບ**

### 2

ຜົນປະໂຫຍດທາງການສະສົມທຶນຂອງ
ທ້າວບຸນມີ ແລະ ຄອບຄົວໃນກໍລະນີ
ສິ້ນສຸດສັນຍາໂດຍບໍ່ມີເຫດການຫຍັງ
ເກີດຂຶ້ນກັບທ້າວບຸນມີ

ລາວຈະໄດ້ຮັບເງິນຄືນ
ຫຼັງຈາກສັນຍາ
ຄົບກຳນົດ 15 ປີ

**65.991.500 ກີບ**

# ຄຳຖາມທີ່ມັກຖືກຖາມ

**ຖ** ຂ້າພະເຈົ້າຄວນກວດສຸຂະພາບກ່ອນຊື້ຜະລິດຕະພັນ ພຣູໄລ້ ເຊັບເວີບໍ່?

**ຕ** ທ່ານອາດຈະໄດ້ຮັບການກວດສຸຂະພາບກ່ອນຊື້ຜະລິດຕະພັນ ພຣູໄລ້ ເຊັບເວີ ອີງຕາມອາຍຸ ແລະ ວົງເງິນປະກັນໄພ. ຜູ້ສະໝັກປະກັນໄພທີ່ອາຍຸສູງ ແລະ ເລືອກວົງເງິນປະກັນໄພທີ່ສູງ ອາດຕ້ອງໄດ້ຮັບການກວດສຸຂະພາບບາງປະເພດເພີ່ມຕື່ມ.

**ຖ** ຈະເກີດຫຍັງຂຶ້ນຖ້າຫາກວ່າຂ້າພະເຈົ້າບໍ່ສາມາດຈ່າຍເງິນຄ່າທຳນຽມປະກັນໄພ?

**ຕ** ທ່ານຄວນສະໝັກຜະລິດຕະພັນນີ້ຖ້າທ່ານມີຄວາມສາມາດຈ່າຍຄ່າງວດປະກັນໄພທັງໝົດ. ຖ້າທ່ານບໍ່ຈ່າຍຄ່າທຳນຽມຕາມກຳນົດເວລາ, ທ່ານຈະໄດ້ຮັບການຜ່ອນຜັນ 30 ວັນໃນການຈ່າຍຄ່າທຳນຽມ ແລະ ຖ້າຄ່າປະກັນໄພຍັງບໍ່ຖືກຈ່າຍຫຼັງຈາກໄລຍະຜ່ອນຜັນ, ສັນຍາປະກັນໄພຂອງທ່ານຈະຂາດອາຍຸ ແລະ ທ່ານຈະສູນເສຍການຄຸ້ມຄອງຈາກສັນຍາ. ທ່ານອາດຈະຟື້ນສັນຍາຂອງທ່ານຄືນພາຍໃນໄລຍະເວລາຊາວສີ່ (24) ເດືອນນັບແຕ່ວັນຂາດອາຍຸສັນຍາໂດຍການຈ່າຍຄ່າປະກັນໄພທີ່ຄ້າງຈ່າຍທັງໝົດ ເພື່ອສືບຕໍ່ ການໄດ້ຮັບການຄຸ້ມຄອງຈາກສັນຍາ.

**ຖ** ຂ້າພະເຈົ້າສາມາດຍົກເລີກສັນຍາປະກັນໄພຊີວິດໄດ້ບໍ່?

**ຕ** ທ່ານສາມາດຍົກເລີກສັນຍາຜະລິດຕະພັນ ພຣູໄລ້ ເຊັບເວີ ໄດ້ທຸກເວລາ.

**ຕ** ທ່ານສາມາດຍົກເລີກສັນຍາປະກັນໄພຊີວິດໄດ້ພາຍໃນ 30ວັນ ຫຼັງຈາກທີ່ທ່ານເຊັນຮັບສັນຍາການປະກັນໄພ. ຖ້າທ່ານຍົກເລີກສັນຍາໃນຊ່ວງເວລານີ້, ທ່ານຈະໄດ້ຮັບເງິນຄ່າທຳນຽມທີ່ທ່ານໄດ້ຈ່າຍຄືນຫຼັງຈາກຫັກຄ່າກວດສຸຂະພາບອື່ນໆ.

**ຕ** ເລີ່ມຈາກປີທີ 3 ຂອງສັນຍາ, ສັນຍາຈະເລີ່ມສະສົມເງິນຄືນໃຫ້ແກ່ລູກຄ້າທີ່ຊື້ຜະລິດຕະພັນ ພຣູໄລ້ ເຊັບເວີ. ນັ້ນໝາຍຄວາມວ່າ, ພວກເຮົາສາມາດຄືນເງິນບາງສ່ວນໃຫ້ຖ້າຫາກທ່ານຕ້ອງການຍົກເລີກສັນຍາ.

# ກ່ຽວກັບພວກເຮົາ

ບໍລິສັດ ພຣູເດັນໂຊລ໌ ຖືກສ້າງຕັ້ງຂຶ້ນທີ່ເມືອງລອນດອນ ໃນປີ 1848 ເຊິ່ງມີອາຍຸຫຼາຍກວ່າ 170 ປີ ແລະ ພວກເຮົາເປັນໜຶ່ງໃນບໍລິສັດປະກັນໄພທີ່ມີປະຫວັດສາດຍາວນານທີ່ສຸດ.

ບໍລິສັດ ພຣູເດັນໂຊລ໌ ດຳເນີນທຸລະກິດໃນ 15 ປະເທດໃນອາຊີ ແລະ ໄດ້ຮັບການໄວ້ວາງໃຈຈາກລູກຄ້າຫຼາຍ 16 ລ້ານຄົນໃນພາກພື້ນ.

ບໍລິສັດ ພຣູເດັນໂຊລ໌ ມີສຳນັກງານໃຫຍ່ທີ່ລອນດອນ ປະເທດອັງກິດ ແລະ ຮົງກົງ ແລະ ຖືກຈົດທະບຽນເຂົ້າຕະຫຼາດຫຼັກຊັບຢູ່ທີ່ລອນດອນ ແລະ ຮົງກົງ.

ພຣູເດັນໂຊລ໌ ຄໍອອບໂປເຣເຊິນ ເອເຊຍ ເປັນເຈົ້າຂອງ ພຣູເດັນໂຊລ໌ ລາວ ແຕ່ພຽງຜູ້ດຽວ. ພວກເຮົາໄດ້ເປີດຫ້ອງການຕົວແທນຂອງພວກເຮົາທີ່ ນະຄອນຫຼວງວຽງຈັນໃນ ປີ 2015 ແລະ ໄດ້ຮັບໃບອະນຸຍາດການດຳເນີນທຸລະກິດຈາກກະຊວງການເງິນໃນເດືອນເມສາ 2016. ພວກເຮົາໄດ້ນຳເອົາຜະລິດຕະພັນປະກັນໄພຊີວິດທີ່ແທດເໝາະກັບຄວາມຕ້ອງການໃນການຄຸ້ມຄອງ ແລະ ການສະສົມທຶນທາງການເງິນສຳລັບຄົນລາວ. ໃນປະຈຸບັນ, ບໍລິສັດ ພຣູເດັນໂຊລ໌ ລາວ ໄດ້ຈຳໜ່າຍຜະລິດຕະພັນ ແລະ ການບໍລິການຜ່ານເຄືອຂ່າຍທະນາຄານຄູ່ຮ່ວມທຸລະກິດທີ່ມີຊື່ສຽງທົ່ວປະເທດ, ຜ່ານລະບົບຂາຍກົງ, ລວມໄປເຖິງການຈຳໜ່າຍຜະລິດຕະພັນຜ່ານເທິງແອບພຣູເດັນເຊຍເພົ້າສ໌ອີກດ້ວຍ.

**ສອບຖາມຂໍ້ມູນເພີ່ມເຕີມ:**

https://www.prudential.la/ | 021-211 123

Prudential Laos | Prudential Life Assurance (Lao) Company Limited